# ທັກສະຕັ້ງບັ້ງເລກ ຂອງ ຜົນຫານເປັນຈຳນວນທົດສະນິຍົມ

ຊັ້ນຮຽນ: ປ5 ບົດທີ21 ຜົນຫານເປັນຈຳນວນທົດສະນິຍົມ

## 1.ຈຸດປະສົງ

- ໃຫ້ນັກຮຽນສາມາດຄິດໄລ່ ຜົນຫານເປັນຈຳນວນທົດສະນິຍົມ.
- ໃຫ້ນັກຮຽນສາມາດເຂົ້າໃຈ ບ່ອນທີ່ຕື່ມຈຸດຂອງຜົນຫານ.

## 2. ບັນຫາຂອງນັກຮຽນ ເມື່ອຄິດໄລ່ຜົນຫານເປັນຈຳນວນທົດສະນິຍົມ

-ນັກຮຽນຜິດແນວໃດ?

42÷4 = … ອັນໃດ້ຖືກ?

| (ກ) | | | | | (ຂ) | | | | |
|---|---|---|---|---|---|---|---|---|---|
| 4 | 2 | | 4 | | 4 | 2 | | 4 | |
| 0 | 2 | | 15 | | 0 | 2 | 0 | 10.5 | |
| | 0 | | | | | | 0 | | |

-ແບບ(ຂ) ຖືກ.
-ເປັນຫຍັງ ແບບ(ກ) ບໍ່ຖືກ?
ເພາະວ່າ ແບບ(ກ) ລືມຄິດໄລ່ຫົວໜ່ວຍ.

45÷125= … ອັນໃດ້ຖືກ?

| (ກ) | | | | | | (ຂ) | | | | | |
|---|---|---|---|---|---|---|---|---|---|---|---|
| 4 | 5 | 0 | | 125 | | 4 | 5 | 0 | | 125 | |
| | 7 | 5 | 0 | 0.36 | | | 7 | 5 | 0 | 3.6 | |
| | | | 0 | | | | | | 0 | | |

-ແບບ(ກ)ຖືກ.
-ເປັນຫຍັງ ແບບ(ຂ) ບໍ່ຖືກ?
ເພາະວ່າ ແບບ(ຂ) ຜິດບ່ອນໝາຍ
ຈຸດ.

## 3. ວິທີແກ້ບັນຫາຂອງນັກຮຽນ

-ຂຽນໝົດຂອງການຄິດໄລ່.

-ນັບຫຼັກຂອງຕົວຕັ້ງຫານແລ້ວ ຂີດເສັ້ນໃສ່ຜົນຫານມີຈຳນວນຂອງຫຼັກຂອງຕົວຕັ້ງຫານ ແລະ ໝາຍຈຸດ ໃສ່ຂີດເສັ້ນທີ່ສຸດທ້າຍ(ເບື້ອງຂວາ). ຖ້າວ່າຕົວຕັ້ງຫານໃຫ້ບໍ່ໄດ້ຂຽນ0ໃສ່ຫ້ອງຂອງຜົນຫານ.

ຕົວຢ່າງ: 42÷4



**ຂັ້ນທີ1)** ຫຼັກຂອງຕົວຕັ້ງຫານ ມີ **2ຫຼັກ** ສະນັ້ນ **ຂີດ 2ເສັ້ນ ໃສ່ຜົນຫານ ແລະ ໝາຍຈຸດໃສ່ຂີດເສັ້ນທີ່ສຸດທ້າຍ.**

**ຂັ້ນທີ2)** 4ຫົວສິບຫານໃຫ້4ໄດ້ຮັບ1, ເຮົາຂຽນ1ໃສ່ຜົນຫານ. ເອົາ1×4=4 ຈາກນັ້ນເອົາ 4-4=0 ຫົວສິບ ເສດ0, ເຮົາຂຽນ0ໃສ່ຜົນລົບ.

**ຂັ້ນທີ3)** ເລກຫົວໜ່ວຍ2ລົງມາ ແຕ່ 2ຫົວໜ່ວຍຫານໃຫ້4ບໍ່ໄດ້, ສະນັ້ນ ເຮົາຂຽນ0ໃສ່ຜົນຫານ.

**ຂັ້ນທີ4)** ຊັກເລກ0ລົງມາ ແລະ 20ຫານໃຫ້4ໄດ້ຮັບ5, ເຮົາຂຽນ5ໃສ່ຜົນຫານ. ເອົາ4×5=20 ຈາກນັ້ນ ເອົາ 20-20=0 ເສດ0.

| |
|---|
| ຜົນຫານ: 10.5 ສະນັ້ນ 42÷4=10.5 |

ຕົວຢ່າງ: **45÷125**




**ຂັ້ນທີ1)** ຫຼັກຂອງຕົວຕັ້ງຫານ ມີ2ຫຼັກ ສະນັ້ນ ຂີດ2ເສັ້ນໃສ່ພົນຫານ ແລະ ໝາຍຈຸດໃສ່ຂີດເສັ້ນທີ່ສຸດທາຍ.

**ຂັ້ນທີ2)** 4ຫົວຮ້ອຍຫານໃຫ້125ບໍ່ໄດ້, ສະນັ້ນ ເຮົາຂຽນ0ໃສ່ຫ້ອງທີ1 ຂອງຜົນຫານ, 45ຫົວສິບຫານໃຫ້ 125ບໍ່ໄດ້, ສະນັ້ນ ເຮົາຂຽນ0ໃສ່ຫ້ອງທີ2 ຂອງຜົນຫານ.

**ຂັ້ນທີ3)** ຊັກເລກ0ອອກມາ ແລະ ຂຽນ0ໃສ່ຕົວຕັ້ງຫານ. 450ຫົວສ່ວນສິບຫານໃຫ້125ໄດ້ຮັບ3, ເຮົາ ຂຽນ3ໃສ່ຜົນຫານ. ເອົາ 3×125=375 ຈາກນັ້ນເອົາ 450-375=75 ເຮົາຂຽນ 75 ໃສ່ຜົນລົບ.

**ຂັ້ນທີ4)** ຊັກເລກ0ລົງມາ ແລະ ຂຽນ0ຫົວສ່ວນຮ້ອຍໃສ່ຕົວຕັ້ງຫານ. 750ຫານໃຫ້125ໄດ້ຮັບ6, ເຮົາ ຂຽນ6ໃສ່ຜົນຫານ. ເອົາ 6×125=750 ຈາກນັ້ນເອົາ 750-750=0 ເສດ0.

| |
|---|
| ຜົນຫານ: ~~0~~0.36 = 0.36 ສະນັ້ນ 45÷125=0.36 |

ຕົວຢ່າງ: **48.32÷3.2**




**ຂັ້ນທີ1)** ຄູນ10ໃຫ້ຕົວຫານແລະຕົວຕັ້ງຫານ ເພື່ອປຽນໃຫ້ຕົວຫານເປັນຈຳນວນຖ້ວນ.

**ຂັ້ນທີ2)** ຫຼັກຂອງຕົວຕັ້ງຫານ ມີ3ຫຼັກ ສະນັ້ນ ຂີດ3ເສັ້ນໃສ່ພົນຫານ ແລະ ໝາຍຈຸດໃສ່ຂີດເສັ້ນທີ່ສຸດທາຍ. ຫຼັງຈາກນັ້ນຄິດໄລ່ດັ່ງນີ້.




**ຂັ້ນທີ3)** 4ຫົວຮ້ອຍຫານໃຫ້32ບໍ່ໄດ້, ສະນັ້ນ ເຮົາຂຽນ0ໃສ່ຫ້ອງທີ1ຂອງຜົນຫານ, ເອົາ0×32=0 ເຮົາຂຽນ0ໃສ່ຜົນລົບ.

**ຂັ້ນທີ4)** 4ຫົວຮ້ອຍຫານໃຫ້32ບໍ່ໄດ້, ສະນັ້ນ ເຮົາຂຽນ0ໃສ່ຫ້ອງທີ1ຂອງຜົນຫານ, 48ຫົວສິບຫານໃຫ້32ໄດ້ຮັບ1, ສະນັ້ນ ເຮົາຂຽນ1ໃສ່ຫ້ອງທີ2 ຂອງຜົນຫານ. ເອົາ1×32=32 ຈາກນັ້ນເອົາ 48-32=16 ເຮົາຂຽນ16ໃສ່ຜົນລົບ.

**ຂັ້ນທີ5)** ເລກ3ອອກມາ ແລ້ວ 163ຫົວສ່ວນສິບຫານໃຫ້32ໄດ້ຮັບ5, ເຮົາຂຽນ5ໃສ່ຜົນຫານ. ເອົາ5×32=160 ຈາກນັ້ນເອົາ 163-160=3

**ຂັ້ນທີ6)** ເລກ2ລົງມາ ແລ້ວ 32ຫົວສ່ວນຮ້ອຍໃຫ້32ໄດ້ຮັບ1, ເຮົາຂຽນ1ໃສ່ຜົນຫານ. ເອົາ1×32=32 ຈາກນັ້ນເອົາ 32-32=0 ເສດ0.

| |
|---|
| ຜົນຫານ: ~~0~~15.1 = 15.1 ສະນັ້ນ 48.32÷3.2=15.1 |